ແຜນການສອນ
ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 10 ສິງຫາ 2008 (08-10-2008)

ຊີວິດທີ່ສັດຊື່:

ຂໍ້ພຣະຄັນພີໃນບົດຮຽນ: (ເຮັບເຣີ 2:14-18; 3:1,5,14)

ຄຳຖາມແຫ່ງຊີວິດ: ອັນໃດຈະຊ່ວຍໃຫ້ຂ້າພະເຈົ້າຕັ້ງໝັ້ນຢູ່ໃນຄວາມສັດຊື່ຕໍ່ພຣະເຈົ້າ?

ພຣະຄັນພີແຫ່ງຄວາມຈິງ: ພຣະເຈົ້າປະທານພລັງໃຫ້ຜູ້ທີ່ເຊື່ອໃນພຣະອົງຕັ້ງຢູ່ໃນຄວາມສັດຊື່ຕໍ່ພຣະອົງ.

ຜົນສະທ້ອນຕໍ່ຊີວິດ: ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍໃຫ້ທ່ານຄົ້ນຫາຫົນທາງດີທີ່ສຸດຈາກພຣະເຈົ້າໃນຊີວິດປະຈຳວັນຂອງທ່ານໂດຍ:

- ການຂອກຫາຫົນທາງໃຫ້ມີພລັງຕັ້ງໝັ້ນໃນຄວາມສັດຊື່ຕໍ່ພຣະເຈົ້າ, ແລະ
- ການຕັດສິນໃຈທີ່ເພິ່ງພລັງຈາກພຣະເຈົ້າເພື່ອຕັ້ງໝັ້ນຄົງຢູ່ໃນຄວາມສັດຊື່ນັ້ນ.

ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັນພີແລະບົດຮຽນ
2. ສຶກສາຂໍ້ພຣະຄັນພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕິກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍ່ຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລົ້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

ແນະນຳ:

- ເພື່ອເປັນການທົບທວນບົດຮຽນອາທິດແລ້ວນີ້ ທີ່ໄດ້ເລີ້ມຮຽນຈາກພຣະທັນເຮັບເຣີຊຶ່ງມີຄຳຂວັນວ່າ: "**ຊີວິດທີ່ດີທີ່ສຸດ**" ມີຫົວຂໍ້ວ່າ: "**ຊີວິດທີ່ມີໃຈຈົດຈໍ່**" ບອກກັບນັກຮຽນວ່າບົດຮຽນໃນອາທິດນີ້ຈະເປັນການເວົ້າເຖິງເຣື່ອງການຈົດຈໍ່ຢູ່ທີ່ພຣະເຢຊູ ແລະການດຳເນີນຊີວິດທີ່ມີຄວາມສັດຊື່ (ດ້ວຍການມີຄວາມເຊື່ອທີ່ເຕັມປ່ຽມ) ໃນພຣະອົງ.
- ໃຫ້ນັກຮຽນບອກຫົນທາງທີ່ພຣະເຈົ້າຊົງຈັດຕຽມທາງການດຳເນີນຊີວິດທີ່ມີຊີວິດສັດຊື່ຕໍ່ພຣະອົງ.
- ພຣະເຈົ້າເບິ່ງທີ່ຄວາມສັດຊື່ຂອງຜູ້ທີ່ຕິດຕາມພຣະອົງ, ບໍ່ແມ່ນແຕ່ການຕິດຕາມພຣະອົງເທົ່ານັ້ນ.

1. **ຜູ້ຊ່ວຍຂອງຂ້າພະເຈົ້າ:** (ເຮັບເຣີ 2:14-18)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ເຮັບເຮີ 2:14-18
- ໃຫ້ແນະນຳໂດຍຜ່ານການເວົ້າ, ອັນທີນຶ່ງຄືການມີຊີວິດຢູ່ຂອງຄຣິສຕຽນໃຫ້ເປັນເໝືອນຊີວິດຂອງພຣະເຢຊູ.
- ຈັດນັກຮຽນເປັນ 4 ກຸ່ມນ້ອຍໆ ແລ້ວເອົາຕອນທີ່ວ່າ **ພຣະເຢຊູ, ເປັນພຣະຜູ້ຊ່ວຍຂອງພວກເຮົາ** ໃຫ້ແຕ່ລະກຸ່ມຄົ້ນຄວ້າ, ໃຫ້ແຕ່ລະກຸ່ມອະທິບາຍว่า ພຣະເຢຊູເປັນແບບຢ່າງແນວໃດ ແລະເປັນພຣະຜູ້ຊ່ວຍແນວໃດແກ່ຜູ້ທີ່ຕິດຕາມພຣະອົງໃນສະໄມນີ້. ໃຫ້ເວລາເຂົາເຈົ້າອ່ານຄຳແນະນຳ
- ສລຸບໂດຍຫຍໍ້: ເປັນດ້ວຍເຫດໃດ, ພຣະເຢຊູຈຶ່ງເປັນພຣະຜູ້ຊ່ວຍຂອງພວກເຮົາ, ເປັນແບບຢ່າງຂອງຄຣິສຕຽນທີ່ດຳເນີນໄປຢ່າງບໍ່ຢຸດຢັ້ງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຮີ 2:4-18)

1. ເປັນເພາະເຫດໃດພຣະເຈົ້າຈຶ່ງສົ່ງພຣະເຢຊູມາຢູ່ຖ້ານກາງມະນຸດ?
2. ຄົນໃນສະໄມນີ້ໄດ້ຕົກເປັນທາດສິ່ງຂອງແນວໃດ?
3. ບັນປາຍພວກເຮົາຫາມີຄວາມຢ້ານກົວຫຍັງ? ພຣະເຢຊູໄດ້ເອົາຊະນະ ແລະເຮັດໃຫ້ຄວາມຢ້ານກວານີ້ພ່າຍແພ້ໄປຢ່າງໃດ?
4. ແມ່ນດ້ວຍອັນໃດທີ່ເຮັດໃຫ້ພຣະເຢຊູໄດ້ຊົງຖືກແຕ່ງຕັ້ງໃຫ້ເປັນຜູ້ສູງສຸດ?
5. ແມ່ນອັນໃດເປັນເຄື່ອງໄຖ່ບາບ?
6. ພຣະເຢຊູຄຣິດເຈົ້າຊ່ວຍພວກເຮົາໃຫ້ຫລຸດພົ້ນຈາກການຫລອກລວງແນວໃດ?

2. <u>ການຖືກຮຽກເອີ້ນຂອງຂ້າພະເຈົ້າ:</u> (ເຮັບເຮີ 3:1,5-6)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເຮັບເຮີ 3:1
- ຜູ້ທີ່ເຊື່ອທັງຫລາຍໄດ້ຖືກຮຽນເອີ້ນໃຫ້ເກີດຜົນໃນດ້ານການຮັບໃຊ້ພຣະຄຣິດໃນຫລາຍວິທີທາງ.
- ນຳພານັກຮຽນໃຫ້ບອກຊື່ໜ້າທີ່ການຮັບໃຊ້ຂອງເຂົາເຈົ້າເອງ ຫລືຄົນອື່ນໆ ແລະເວົ້າເຖິງແນວທາງການທີ່ຄົນທັງຫລາຍທີ່ເຂົາມີຄວາມສາມາດຮັບໃຊ້ພຣະຄຣິດໃນເວລາພັກວຽກງານ.
- ໃຫ້ນັກຮຽນອາສາສມັກອ່ານພຣະທັມເຮັບເຮີ 3:5-6.
- ໃຫ້ຂຽນຊື່ ໂມເຊແລະພຣະເຢຊູໃສ່ເທິງກະດານ ແລ້ວນຳພານັກຮຽນໃຫ້ປຽບທຽບລັກສະນະຂອງໂມເຊ ແລະ ຂອງພຣະເຢຊູ, ບາງລັກສະນະອາດຄືກັນ, ແລະບາງຢ່າງຈະມີຄວາມແຕກຕ່າງກັນ. ໃຫ້ໃຊ້ເວລາໜ້ອຍນຶ່ງເພື່ອເອົາມາປຽບທຽບ ເພື່ອໃຫ້ເຫັນຄວາມແຕກຕ່າງກັນ.
- ໃຫ້ນັກຮຽນເຊື່ອໝັ້ນວ່າການສະເດັດເຂົ້າມາໃນໂລກຂອງພຣະເຢຊູນັ້ນພຣະອົງມີພຣະປະສົງເພື່ອມາຈັດຕຽມຫົນທາງແຫ່ງຄວາມລອດພົ້ນສຳລັບພວກເຮົາຢ່າງເຕັມປ່ຽມຄົບບໍຣິບູນ.
- ຂໍ້ຄວນພິຈາຣະນາໃນພຣະຄຳໃນບົດຮຽນໃຫ້ໄດ້ໃຈຄວາມດີ ໃຫ້ອ່ານພຣະທັມ ມັດທາຍ 7:3 ແລະ ລູກາ 12:24. ແລ້ວນຳພານັກຮຽນສົນທະນາເຣື່ອງການໃຫ້ຕາຂອງພວກເຮົາຈົດຈ່ໍຢູ່ທີ່ພຣະເຢຊູທີ່ຕັ້ງໝັ້ນຢູ່ໃນຄວາມເຊື່ອຢ່າງເຕັມປ່ຽມ.
- ສົນທະນາໃນປໂຍກທີ່ว่า " ຍຶດຖື ສນັບສນູນ ແລະ ຄວາມເຊື່ອໄວ້ວາງใจ ໃຫ້ເປັນຄວາມຫວັງຂອງພວກເຮົາ ໂດຍການຕອບສນອງຄຳຖາມຕ່າງໆ..

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຮີ 3:1,5-6)

1. ພວກເຮົາເປັນອ້າຍນ້ອງ ຫລືເປັນເພື່ອນກັນໃນທາງໃດ?
2. ແມ່ນຫຍັງທີ່ເປັນການຮຽກຮ້ອງໃຫ້ເຮົາເຮັດດີທີ່ສຸດ?
3. ແມ່ນອັນໃດທີ່ເຮັດໃຫ້ພວກເຮົາເປັນຄົນບໍຣິສຸດ?
4. ໃຫ້ພິຈາຣະນາເຖິງພຣະເຢຊູນັ້ນໝາຍຄວາມວ່າແນວໃດ?
5. ໃນທາງໃດທີ່ພຣະເຢຊູໄດ້ຊົງເປັນໃຫຍ່ກວ່າໂມເຊ?

3. <u>ພຣະຄັນຄີຂອງພຣະເจ้า:</u> (ເຮັບເຣີ 3:7-11)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 19:19-21
- ໃຫ້ບອກນັກຮຽນຮູ້ວ່າຜູ້ຂຽນພຣະທັມເຮັບເຣີໄດ້ສືບທອດມາຈາກພຣະທັມເພງສັຣເສີນຊຶ່ງຄົນສ່ວນຫລາຍອາດບໍ່ໄດ້ຮຽນເອີ້ນໃຫ້ມາເປັນຜູ້ນຳເພື່ອຊີວິດ, ແຕ່ໃຫ້ມາຕັກເຕືອນຜູ້ທີ່ເຊື່ອ, ໃຫ້ໄດ້ຍິນສຽງຂອງພຣະເจ้าຜ່ານທາງພຣະຄຳ ແລະໃຫ້ຕັ້ງໝັ້ນຢູ່ໃນຄວາມເຊື່ອ ໄວ້ວາງใจ.
- ໃຫ້ນັກຮຽນນສເນີບາງຢ່າງທີ່ພໍ່ແມ່ໄດ້ໃຫ້ຄຳຕັກເຕືອນລູກ ຊຶ່ງບໍ່ແມ່ນຕົບຕີ, ແຕ່ເພື່ອຊ່ວຍໃຫ້ເຂົາປອດພັຍ.
- ຊີ້ແຈງໃຫ້ເຫັນຄຸນຄ່າຂອງພຣະຄຳຂອງພຣະເจ้า ເພື່ອໃຫ້ຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອທຸກໆ ມື້ທຸກວັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ເຮັບເຣີ 3:7-11)
1. ການຕັກເຕືອນຂອງຂໍ້ຕ່າງໆ ເຫລົ່ານີ້ເພື່ອຫຍັງແດ່?
2. ຂໍ້ຕັກເຕືອນເຫລົ່ານີ້ໄດ້ກົງກັບປັນຫາທຸກມື້ນີ້ແນວໃດ?

4. <u>ຄຣິສຕະຈັກຂອງພຣະເจ้า:</u> (ເຮັບເຣີ 3:12-14)

- ໃຫ້ນັກຮຽນອາສາສມັກອ່ານ ພຣະທັມ ເຮັບເຣີ 3:12-14
- ໃຫ້ສົນທະນາກັບໃນຄຳຖາມຕໍ່ໄປນີ້: ລະຫວ່າງເພື່ອນທີ່ເປັນຄຣິສຕຽນກັບເພື່ອນທີ່ບໍ່ເປັນຄຣິສຕຽນມີຄວາມແຕກຕ່າງກັນແນວໃດແດ່?
- ຜູ້ທີ່ສນັບສນຸນກັບຜູ້ທີ່ໃຫ້ກຳລັງใจສະມາຊິກໃນໂບດໄດ້ສເນີໃຫ້ຕ່າງກັນແນວໃດ?
- ຄຳຖາມ: ແມ່ນຫຍັງທີ່ໂບດ ແລະສະມາຊິກໃນໂບດສາມາດຊ່ວຍໃຫ້ບັນດາຜູ້ທີ່ເຊື່ອຕັ້ງໝັ້ນຄົງຢູ່ໃນຄວາມເຊື່ອໄດ້?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັນຄີ:</u> (ເຮັບເຣີ 3:12-14)
1. ແມ່ນດ້ວຍສາເຫດອັນໃດທີ່ເຮັດໃຫ້ຄົນທັງຫລາຍຫັນໜີອອກຈາກຫົນທາງຂອງພຣະເจ้า?
2. ບັນດາຜູ້ທີ່ເຊື່ອທັງຫລາຍໄດ້ໝູນຈິດໝູນใจກັບດຸປານໃດ?

<u>ບົດຮຽນພຣະຄັນຄີແຫ່ງຄວາມจິງ</u>

- ຜູ້ທີ່ເຊື່ອທັງຫລາຍສາມາດໄວ້ວາງใจໄດ້ວ່າພຣະເຢຊູເປັນຜູ້ຊ່ວຍຂອງເຂົາໃນຍາມເຂົາຖືກທົດລອງ.
- ຜູ້ທີ່ເຊື່ອໝັ້ນຄົງ ແລະເຕີບໂຕເຂັ້ມແຂງທາງດ້ານຈິດວິນຍານໃຫ້ກຳລັງใจຂອງຄຣິສຕຽນຄົນອື່ນໆ.